ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 301/ປປທ

ນະຄອນຫຼວງວຽງຈັນ, ວັນທີ 09.12.2016

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 023/ສພຊ, ລົງວັນທີ 09 ພະຈິກ 2016 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 052/ຄປຈ, ລົງວັນທີ 01 ທັນວາ 2016.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ).
ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 023 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09/11/16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ
## (ສະບັບປັບປຸງ)

---

ອີງຕາມ ລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າຂອງ ວັນທີ 9 ພະຈິກ 2016.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ — ເລກທີ 05 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 9 ພະຈິກ 2016

# ກົດໝາຍ
# ວ່າດ້ວຍການແກ້ໄຂຄຳຮ້ອງທຸກ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການດຳເນີນການແກ້ໄຂຄຳຮ້ອງທຸກ, ຄຸ້ມຄອງ ແລະ ກວດກາຜົນການແກ້ໄຂຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ຖືກຕ້ອງຕາມກົດໝາຍ ແນໃສ່ເພີ່ມທະວີນິຕິທຳ, ປົກປັກຮັກສາຜົນປະໂຫຍດຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2 (ປັບປຸງ) ຄຳຮ້ອງທຸກ**

ຄຳຮ້ອງທຸກ ແມ່ນ ເອກະສານຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂກ່ຽວກັບການກະທຳ ຂອງບຸກຄົນ ຫຼື ຄຳຕົກລົງຂອງການຈັດຕັ້ງໃດໜຶ່ງ ທີ່ຕົນເຫັນວ່າເປັນການລະເມີດກົດໝາຍ, ບໍ່ໄດ້ຮັບຄວາມຍຸຕິທຳ, ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ຄຳຮ້ອງທຸກ ມີ ສາມ ປະເພດ ຄື ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ.

1. ຄຳສະເໜີ ແມ່ນ ເອກະສານຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ເພື່ອພິຈາລະນາແກ້ໄຂ ກ່ຽວກັບການກະທຳ, ການຕົກລົງ ຂອງບຸກຄົນ, ຂອງການຈັດຕັ້ງໃດໜຶ່ງ ທີ່ເຫັນວ່າເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

2. ຄຳຮ້ອງຟ້ອງ ແມ່ນ ເອກະສານຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ ກ່ຽວກັບການກະທຳ, ການຕົກລົງຂອງບຸກຄົນ, ຂອງການຈັດຕັ້ງໃດໜຶ່ງ ທີ່ເຫັນວ່າມີການລະເມີດກົດໝາຍ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

3. ຄຳຮ້ອງຂໍຄວາມເປັນທຳ ແມ່ນ ເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ເພື່ອຄົ້ນຄວ້າ, ກວດກາ ແລະ ພິຈາລະນາຜົນການແກ້ໄຂຄຳສະເໜີຂອງ ອົງການປົກຄອງທ້ອງຖິ່ນ, ລັດຖະບານ ຫຼື ຜົນຂອງການແກ້ໄຂຄຳຮ້ອງຟ້ອງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ທີ່ເຫັນວ່າການແກ້ໄຂນັ້ນ ເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

**ມາດຕາ 3 (ປັບປຸງ) ການແກ້ໄຂຄຳຮ້ອງທຸກ**

ການແກ້ໄຂຄຳຮ້ອງທຸກ ແມ່ນ ການນຳເອົາຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມາຄົ້ນຄວ້າພິຈາລະນາແກ້ໄຂ ໂດຍອົງການບໍລິຫານ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ ຕາມພາລະບົດບາດຂອງຕົນ ຢ່າງຖືກຕ້ອງ ແລະ ເປັນທຳ.

**ມາດຕາ 4 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພົນລະເມືອງ** ໝາຍເຖິງ ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ;

2. **ນິຕິບຸກຄົນ** ໝາຍເຖິງ ການຈັດຕັ້ງ ຫຼື ອົງການ ທີ່ຂຶ້ນທະບຽນວິສາຫະກິດຊຶ່ງມີຊື່, ສະຖານທີ່ຕັ້ງສຳນັກງານ, ມີຊັບສິນບັດເປັນຂອງຕົນເອງ, ມີສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. **ການຈັດຕັ້ງ** ໝາຍເຖິງ ການຈັດຕັ້ງຂອງ ລັດ, ລວມໝູ່ ຫຼື ສັງຄົມ ທີ່ໄດ້ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

4. **ຜູ້ຮ້ອງທຸກ** ໝາຍເຖິງ ຜູ້ສະເໜີ, ຜູ້ຮ້ອງຟ້ອງ ແລະ ຜູ້ຮ້ອງຂໍຄວາມເປັນທຳ;

5. **ຜູ້ຖືກຮ້ອງທຸກ** ໝາຍເຖິງ ຜູ້ຖືກສະເໜີ, ຜູ້ຖືກຮ້ອງຟ້ອງ ແລະ ຜູ້ຖືກຮ້ອງຂໍຄວາມເປັນທຳ;

6. **ຜູ້ສະເໜີ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳສະເໜີຂອງຕົນຕໍ່ການຈັດຕັ້ງ ທີ່ມີສິດ ແລະ ໜ້າທີ່ແກ້ໄຂທາງດ້ານບໍລິຫານ;

7. **ຜູ້ຖືກສະເໜີ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຜູ້ອື່ນສະເໜີຕໍ່ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ແກ້ໄຂທາງດ້ານບໍລິຫານວ່າຕົນເປັນຜູ້ລະເມີດກົດໝາຍ ແລະ ລະບຽບການ;

8. **ຜູ້ຮ້ອງຟ້ອງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຟ້ອງຂອງຕົນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ;

9. **ຜູ້ຖືກຮ້ອງຟ້ອງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຜູ້ອື່ນຮ້ອງຟ້ອງຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນວ່າເປັນຜູ້ລະເມີດກົດໝາຍ;

10. ຜູ້ຮ້ອງຂໍຄວາມເປັນທຳ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຄຳຮ້ອງຂໍຄວາມເປັນທຳ ຂອງຕົນຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ;

11. ນິຕິທຳ ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເຂັ້ມງວດ;

12. ການຕົກລົງ ໝາຍເຖິງ ການອອກ ຂໍ້ຕົກລົງ ຫຼື ແຈ້ງການຂອງ ອົງການບໍລິຫານ, ອົງການສືບສວນ-ສອບສວນ, ຄຳຕົກລົງຂອງ ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ, ມະຕິຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 5 (ປັບປຸງ) ນະໂຍບາຍ ຂອງລັດກ່ຽວກັບວຽກງານແກ້ໄຂຄຳຮ້ອງທຸກ**

ລັດ ອຳນວຍຄວາມສະດວກໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ສິດຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂເພື່ອປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ເຮັດໃຫ້ກົງຈັກລັດ ມີຄວາມເຂັ້ມແຂງ, ພະນັກງານມີຄວາມໂປ່ງໃສ, ປະຕິບັດໜ້າທີ່ຢ່າງຖືກຕ້ອງ ແລະ ເປັນທຳ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ.

ລັດ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນ ໃຫ້ອົງການທີ່ກ່ຽວຂ້ອງຕາມຄວາມເໝາະສົມ ເພື່ອສາມາດເຄື່ອນໄຫວວຽກງານໃນການແກ້ໄຂຄຳຮ້ອງທຸກຢ່າງ ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ຊຸກຍູ້, ສົ່ງເສີມໃຫ້ມີການໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ຢ່າງກວ້າງຂວາງ, ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນໃນໝູ່ປະຊາຊົນ ຕາມປະເພນີ, ກົດໝາຍ ແລະ ລະບຽບການ ເພື່ອຫຼຸດຜ່ອນການຮ້ອງທຸກ ລວມທັງສຽງຈົ່ມວ່າຂອງສັງຄົມ.

**ມາດຕາ 6 (ປັບປຸງ) ຫຼັກການກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ**

ການແກ້ໄຂຄຳຮ້ອງທຸກ ຕ້ອງຮັບປະກັນຕາມຫຼັກການພື້ນຖານ ດັ່ງນີ້:

1. ຖືກຕ້ອງຕາມ ລັດຖະທຳມະນູນ, ກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ;
2. ຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງເປັນທຳ ແລະ ທັນຕາມກຳນົດເວລາ;
3. ສະເໝີພາບຕໍ່ໜ້າກົດໝາຍ;
4. ແຈ້ງຜົນຂອງການແກ້ໄຂໃຫ້ ຜູ້ຮ້ອງທຸກ, ຜູ້ຖືກຮ້ອງທຸກ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເປັນລາຍລັກອັກສອນ.

**ມາດຕາ 7 (ປັບປຸງ) ສິດ, ພັນທະ ຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງທຸກຕໍ່ ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ທີ່ຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະລາຍງານ, ເຂົ້າຮ່ວມ ແລະ ປະກອບສ່ວນໃນການແກ້ໄຂຄຳຮ້ອງທຸກ ເມື່ອເຫັນວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ມີການລະເມີດກົດໝາຍ.

ມາດຕາ 8 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບການແກ້ໄຂຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ໃນດິນແດນຂອງ ສປປ ລາວ ແລະ ພົນລະເມືອງລາວ ທີ່ຢູ່ນອກດິນແດນ ຂອງ ສປປ ລາວ.

ມາດຕາ 9 ການຮ່ວມມືສາກົນ

ລັດ ສົ່ງເສີມໃຫ້ມີການພົວພັນຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຄຳຮ້ອງທຸກ ດ້ວຍການແລກປ່ຽນ ບົດຮຽນ, ປະສົບການ, ຍົກລະດັບທາງດ້ານວິຊາການ ໃຫ້ພະນັກງານເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ລະບຽບການກ່ຽວກັບຄຳຮ້ອງທຸກ

### ໝວດທີ 1
### ເນື້ອໃນຄຳຮ້ອງທຸກ

ມາດຕາ 10 ເນື້ອໃນຄຳຮ້ອງທຸກ

ຄຳຮ້ອງທຸກ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ສະຖານທີ່ ຂອງອົງການທີ່ກ່ຽວຂ້ອງ ຊຶ່ງຜູ້ຮ້ອງທຸກຍື່ນເຖິງ;

2. ຊື່, ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ, ເລກໂທລະສັບ ແລະ ທີ່ຢູ່ທາງເອເລັກໂຕຣນິກຂອງ ຜູ້ຮ້ອງທຸກ ແລະ ຜູ້ຖືກຮ້ອງທຸກ (ຖ້າມີ);

3. ຄວາມເປັນມາຂອງເຫດການ ຫຼື ຂໍ້ຂັດແຍ່ງ, ຜົນການແກ້ໄຂຂອງອົງການທີ່ກ່ຽວຂ້ອງ, ບັນຫາທີ່ຕ້ອງການໃຫ້ແກ້ໄຂ ໂດຍອ້າງເຫດຜົນ ແລະ ຂໍ້ມູນຫຼັກຖານອ້າງອີງ;

4. ສະຖານທີ່, ວັນທີ, ລາຍເຊັນ ແລະ ລາຍໂປ້ມື ຂອງຜູ້ຮ້ອງທຸກ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ.

ຄຳຮ້ອງທຸກ ຕ້ອງເຮັດເປັນພາສາລາວ ທີ່ ສາມາດອ່ານ ແລະ ເຂົ້າໃຈເນື້ອໃນໄດ້ງ່າຍ; ໃນກໍລະນີຄຳຮ້ອງທຸກທີ່ເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການຢັ້ງຢືນຈາກອົງການທະບຽນສານ.

ມາດຕາ 11 (ປັບປຸງ) ສິດ ແລະ ພັນທະຂອງຜູ້ຮ້ອງທຸກ

ຜູ້ຮ້ອງທຸກ ມີ ສິດ ຕົ້ນຕໍ ດັ່ງນີ້:

1. ຍື່ນຄຳຮ້ອງທຸກດ້ວຍຕົນເອງ ຫຼື ໂດຍຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ;

2. ໄດ້ຮັບການປົກປ້ອງຈາກການບັງຄັບ, ນາບຂູ່ ແລະ ໄດ້ຮັບການຮັກສາເປັນຄວາມລັບໃນສິ່ງທີ່ຕົນໄດ້ລາຍງານ ລວມທັງ ຊື່, ນາມສະກຸນ, ທີ່ຢູ່ຂອງຕົນ;

3. ໄດ້ຮັບການຟື້ນຟູຄືນ ກ່ຽວກັບສິດຂອງຕົນ ທີ່ຖືກລະເມີດ ແລະ ໄດ້ຮັບການໃຊ້ແທນຄ່າເສຍຫາຍຈາກຜູ້ລະເມີດ;

4. ຖອນຄຳຮ້ອງທຸກຂອງຕົນ ໃນທຸກຂັ້ນຕອນຂອງການພິຈາລະນາແກ້ໄຂ;

5. ໄດ້ຮັບການແນະນຳ ແລະ ຮັບຊາບຜົນຂອງການແກ້ໄຂຄຳຮ້ອງທຸກຢ່າງເປັນລາຍລັກອັກສອນ ຈາກອົງການທີ່ກ່ຽວຂ້ອງ.

ຜູ້ຮ້ອງທຸກ ມີ ພັນທະຕົ້ນຕໍ ດັ່ງນີ້:

1. ແຈ້ງຊື່, ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ ແລະ ທີ່ຢູ່ປັດຈຸບັນຂອງຕົນໃຫ້ຊັດເຈນ;

2. ສະເໜີ, ຊີ້ແຈງອະທິບາຍ ກ່ຽວກັບຄຳຮ້ອງທຸກຂອງຕົນໃຫ້ຈະແຈ້ງ, ຖືກຕ້ອງຕາມຄວາມຈິງ ພ້ອມທັງສະໜອງຂໍ້ມູນ, ຫຼັກຖານໃຫ້ແກ່ອົງການທີ່ກ່ຽວຂ້ອງ ຢ່າງຄົບຖ້ວນ ແລະ ທັນເວລາ;

3. ຮັບຜິດຊອບຕໍ່ເນື້ອໃນຄຳຮ້ອງທຸກ, ຂໍ້ມູນ ແລະ ຫຼັກຖານ ທີ່ຕົນນຳມາສະເໜີ ຕໍ່ອົງການທີ່ກ່ຽວຂ້ອງຕາມກົດໝາຍ;

4. ຮັບຜິດຊອບຄ່າເສຍຫາຍຕໍ່ການຮ້ອງທຸກທີ່ບໍ່ມີມູນຄວາມຈິງ;

5. ປະຕິບັດ ຕາມການເຊີນ ຫຼື ໝາຍຮຽກຂອງ ອົງການທີ່ກ່ຽວຂ້ອງ ຕາມກຳນົດເວລາ ແລະ ສະຖານທີ່, ຖ້າບໍ່ປະຕິບັດຕາມການເຊີນ ຫຼື ໝາຍຮຽກ ທີ່ໄດ້ຮັບເຖິງສາມຄັ້ງຕິດຕໍ່ກັນ ໂດຍບໍ່ມີເຫດຜົນຖືວ່າໝົດສິດ;

6. ວາງຕົວໃຫ້ເໝາະສົມ ແລະ ເຄົາລົບກົດລະບຽບຂອງອົງການທີ່ ເຊີນ ຫຼື ຮຽກ;

7. ປະຕິບັດຂໍ້ຕົກລົງກ່ຽວກັບການແກ້ໄຂຄຳຮ້ອງທຸກ ທີ່ມີຜົນສັກສິດທາງດ້ານກົດໝາຍ.

**ມາດຕາ 12 ສິດ ແລະ ພັນທະຂອງຜູ້ຖືກຮ້ອງທຸກ**

ຜູ້ຖືກຮ້ອງທຸກ ມີ ສິດຕົ້ນຕໍ ດັ່ງນີ້:

1. ຮັບຊາບເນື້ອໃນຄຳຮ້ອງທຸກ ແລະ ແກ້ຄຳຮ້ອງທຸກ ທີ່ກ່າວຫາໃສ່ຕົນ;

2. ປົກປ້ອງຕົນເອງ ດ້ວຍການນຳເອົາຂໍ້ມູນ, ຫຼັກຖານ ທີ່ຖືກຕ້ອງມາຢັ້ງຢືນ;

3. ໄດ້ຮັບການຟື້ນຟູຄືນກຽດສັກສີ ແລະ ຜົນປະໂຫຍດອື່ນ ທີ່ຖືກເສຍຫາຍ ຍ້ອນການຮ້ອງທຸກ ທີ່ບໍ່ມີມູນຄວາມຈິງ;

4. ສະເໜີໃຫ້ອົງການທີ່ກ່ຽວຂ້ອງນຳໃຊ້ມາດຕະການ ຕໍ່ຜູ້ຮ້ອງທຸກ ທີ່ບໍ່ມີມູນຄວາມຈິງ;

5. ຮັບຊາບຜົນຂອງການແກ້ໄຂຄຳຮ້ອງທຸກຢ່າງເປັນລາຍລັກອັກສອນ ຈາກອົງການທີ່ກ່ຽວຂ້ອງ.

ຜູ້ຖືກຮ້ອງທຸກ ມີ ພັນທະຕົ້ນຕໍ ດັ່ງນີ້:

1. ຊີ້ແຈງ, ອະທິບາຍ ບັນຫາທີ່ຖືກຮ້ອງທຸກ ພ້ອມທັງສະໜອງ ຂໍ້ມູນ, ຫຼັກຖານ ທີ່ຖືກຕ້ອງໃຫ້ແກ່ອົງການທີ່ກ່ຽວຂ້ອງ;

2. ປະຕິບັດຕາມ ການເຊີນ ຫຼື ໝາຍຮຽກ ຂອງອົງການທີ່ກ່ຽວຂ້ອງ ຖ້າບໍ່ປະຕິບັດຕາມການເຊີນ ຫຼື ໝາຍຮຽກເຖິງສາມຄັ້ງຕິດຕໍ່ກັນ ໂດຍບໍ່ມີເຫດຜົນຕ້ອງຮັບຜິດຊອບຕາມກົດໝາຍ;

3. ວາງຕົວໃຫ້ເໝາະສົມ ແລະ ເຄົາລົບກົດລະບຽບຂອງອົງການທີ່ ເຊີນ ຫຼື ຮຽກ;

4. ປະຕິບັດຕາມການຕົກລົງ ກ່ຽວກັບການແກ້ໄຂຄຳຮ້ອງທຸກ ທີ່ມີຜົນສັກສິດທາງດ້ານກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 2
## ການຍື່ນຄໍາຮ້ອງທຸກ ແລະ ການຮັບຕ້ອນຜູ້ຮ້ອງທຸກ

ມາດຕາ 13 (ປັບປຸງ) ການຍື່ນຄໍາຮ້ອງທຸກ

ຄໍາຮ້ອງທຸກ ທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ໃຫ້ປະຕິບັດ ຕາມ ວັນ, ເວລາ ແລະ ສະຖານທີ່ ທີ່ອົງການດັ່ງກ່າວໄດ້ກໍານົດໄວ້.

ສໍາລັບການຍື່ນຄໍາຮ້ອງຂໍຄວາມເປັນທໍາ ຖ້າຜູ້ຮ້ອງຂໍ ຫາກມີຄວາມຫຍຸ້ງຍາກ ໃຫ້ຍື່ນຕໍ່ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ປະຈໍາຢູ່ເມືອງບ່ອນຕົນອາໄສຢູ່ ກໍໄດ້.

ມາດຕາ 14 (ປັບປຸງ) ການຮັບຕ້ອນຜູ້ຮ້ອງທຸກ

ອົງການແກ້ໄຂຄໍາຮ້ອງທຸກ ຕ້ອງມີພະນັກງານຮັບຕ້ອນຜູ້ທີ່ມາຍື່ນຄໍາຮ້ອງທຸກ.

ພະນັກງານທີ່ຮັບຕ້ອນ ຕ້ອງສະແດງຄວາມຕ້ອນຮັບ, ເວົ້າຈາສຸພາບນິ້ມນວນ, ສຸຂຸມ, ມີມາລະຍາດດີ, ມີຈັນຍາບັນ, ຈັນຍາທໍາ, ວາງຕົວເປັນກາງ ແລະ ມີການປະພຶດທີ່ເໝາະສົມ.

ນອກຈາກການຮັບຕ້ອນແລ້ວ ພະນັກງານຍັງຕ້ອງໃຫ້ຄໍາປຶກສາ, ແນະນໍາ, ອະທິບາຍທາງດ້ານກົດໝາຍໃຫ້ຜູ້ຖືກຮັບຕ້ອນເປັນຢ່າງດີ.

ມາດຕາ 15 (ປັບປຸງ) ສະຖານທີ່ ແລະ ເວລາຮັບຕ້ອນຜູ້ຮ້ອງທຸກ

ເພື່ອອໍານວຍຄວາມສະດວກໃຫ້ແກ່ ຜູ້ທີ່ມາຍື່ນຄໍາຮ້ອງທຸກ, ອົງການທີ່ກ່ຽວຂ້ອງ ຕ້ອງມີສະຖານທີ່ຮັບຕ້ອນຢ່າງເໝາະສົມ.

ການຮັບຕ້ອນນັ້ນ ໃຫ້ດໍາເນີນຢູ່ໃນສະຖານທີ່ສະເພາະ ແລະ ໃນໂມງລັດຖະການ.

# ພາກທີ III
# ການພິຈາລະນາ ແລະ ແກ້ໄຂຄໍາຮ້ອງທຸກ

## ໝວດທີ 1
## ການພິຈາລະນາ ແລະ ແກ້ໄຂຄໍາສະເໜີ

ມາດຕາ 16 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄໍາສະເໜີ

ການພິຈາລະນາ ແລະ ແກ້ໄຂຄໍາສະເໜີ ແມ່ນ ການນໍາເອົາຄໍາສະເໜີຂອງ ພົນລະເມືອງ, ນິຕິບຸກຄົນ ແລະ ການຈັດຕັ້ງ ມາກວດກາ, ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂ ຢ່າງຮອບດ້ານ, ພາວະວິໄສ ແລະ ແກ້ໄຂໃຫ້ໄດ້ຮັບຄວາມເປັນທໍາ.

**ມາດຕາ 17 (ປັບປຸງ) ອົງການພິຈາລະນາ ແລະ ແກ້ໄຂຄຳສະເໜີ**

ອົງການພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ມີ ດັ່ງນີ້:

1. ອົງການປົກຄອງຂັ້ນບ້ານ;
2. ອົງການປົກຄອງຂັ້ນເມືອງ;
3. ອົງການປົກຄອງຂັ້ນແຂວງ;
4. ລັດຖະບານ.

**ມາດຕາ 18 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນບ້ານ**

ກ. ຄຳສະເໜີທີ່ອົງການປົກຄອງຂັ້ນບ້ານ ຮັບມາຄົ້ນຄວ້າພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

1. ຄຳສະເໜີທີ່ບໍ່ພໍໃຈຕໍ່ການຕົກລົງທາງດ້ານບໍລິຫານຂອງອົງການປົກຄອງຂັ້ນບ້ານ, ຄວາມຮັບຜິດຊອບ, ການກະທຳ ຂອງນາຍບ້ານ ແລະ ບຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ;

2. ຄຳສະເໜີທີ່ບໍ່ພໍໃຈຕໍ່ການກະທຳຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ບ້ານດັ່ງກ່າວ.

ຂ. ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້:

1. ອົງການປົກຄອງຂັ້ນບ້ານ ພິຈາລະນາ ແລະ ແກ້ໄຂຄຳສະເໜີ ພາຍໃນເວລາ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ;

2. ອົງການປົກຄອງຂັ້ນບ້ານ ອອກຄຳຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ແລ້ວແຈ້ງການຕົກລົງໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີ ອົງການປົກຄອງຂັ້ນບ້ານພິຈາລະນາແກ້ໄຂຄຳສະເໜີຫາກບໍ່ຖືກຕ້ອງຕາມກົດໝາຍນັ້ນ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກໍມີສິດສະເໜີຕໍ່ອົງການປົກຄອງຂັ້ນເມືອງ.

**ມາດຕາ 19 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນເມືອງ**

ກ. ຄຳສະເໜີທີ່ອົງການປົກຄອງຂັ້ນເມືອງ ຮັບມາຄົ້ນຄວ້າພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

1. ຄຳສະເໜີຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ພໍໃຈຕໍ່ຄຳຕົກລົງຂອງອົງການປົກຄອງຂັ້ນບ້ານ;

2. ຄຳສະເໜີທີ່ບໍ່ພໍໃຈຕໍ່ຄຳຕົກລົງທາງດ້ານບໍລິຫານຂອງອົງການປົກຄອງຂັ້ນເມືອງ, ຄວາມຮັບຜິດຊອບ, ການກະທຳຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ;

3. ຄຳສະເໜີທີ່ບໍ່ພໍໃຈຕໍ່ການກະທຳຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ເມືອງດັ່ງກ່າວ.

ຂ. ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້:

1. ອົງການປົກຄອງຂັ້ນເມືອງ ມອບໃຫ້ຫ້ອງການກວດກາລັດຂັ້ນເມືອງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງກວດກາ ຄົ້ນຄວ້າ, ຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ອົງການປົກຄອງຂັ້ນເມືອງ ພິຈາລະນາແກ້ໄຂພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ;

2. ອົງການປົກຄອງຂັ້ນເມືອງ ອອກຄຳຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ແລ້ວແຈ້ງການຕົກລົງໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີ ຜູ້ສະເໜີຫາກຍັງບໍ່ພໍໃຈຕໍ່ຜົນການແກ້ໄຂຂອງອົງການປົກຄອງຂັ້ນເມືອງ ໃຫ້ປະຕິບັດ ດັ່ງນີ້:

1. ຄຳສະເໜີທີ່ໄດ້ຜ່ານການແກ້ໄຂຂອງອົງການປົກຄອງຂັ້ນບ້ານແລ້ວ ຜູ້ກ່ຽວມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2. ຄຳສະເໜີຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການປົກຄອງຂັ້ນເມືອງໂດຍກົງນັ້ນ ຜູ້ກ່ຽວມີສິດຍື່ນຄຳສະເໜີຕໍ່ອົງການປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາແກ້ໄຂ.

**ມາດຕາ 20 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງອົງການປົກຄອງຂັ້ນແຂວງ**

ກ. ຄຳສະເໜີທີ່ອົງການປົກຄອງຂັ້ນແຂວງ ຮັບມາຄົ້ນຄວ້າພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

1. ຄຳສະເໜີຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ພໍໃຈຕໍ່ຄຳຕົກລົງຂອງອົງການປົກຄອງຂັ້ນເມືອງ;

2. ຄຳສະເໜີທີ່ບໍ່ພໍໃຈຕໍ່ຄຳຕົກລົງທາງດ້ານບໍລິຫານຂອງອົງການປົກຄອງຂັ້ນແຂວງ, ຄວາມຮັບຜິດຊອບ, ການກະທຳຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ;

3. ຄຳສະເໜີທີ່ບໍ່ພໍໃຈຕໍ່ການກະທຳຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ແຂວງດັ່ງກ່າວ.

ຂ. ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້:

1. ອົງການປົກຄອງຂັ້ນແຂວງ ມອບໃຫ້ພະແນກກວດກາລັດຂັ້ນແຂວງ ສົມທົບກັບຂະແໜງການ ທີ່ກ່ຽວຂ້ອງ ກວດກາ ຄົ້ນຄວ້າ, ຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ອົງການປົກຄອງຂັ້ນແຂວງ ພິຈາລະນາແກ້ໄຂພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ;

2. ອົງການປົກຄອງຂັ້ນແຂວງ ອອກຂໍ້ຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ແລ້ວແຈ້ງການຕົກລົງໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີ ຜູ້ສະເໜີຫາກຍັງບໍ່ພໍໃຈຕໍ່ຜົນການຕົກລົງຂອງອົງການປົກຄອງຂັ້ນແຂວງ ໃຫ້ປະຕິບັດ ດັ່ງນີ້:

1. ຄຳສະເໜີທີ່ໄດ້ຜ່ານການແກ້ໄຂຂອງອົງການປົກຄອງຂັ້ນເມືອງແລ້ວ ຜູ້ກ່ຽວມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2. ຄຳສະເໜີຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງຂັ້ນແຂວງ ທີ່ຍື່ນຕໍ່ອົງການປົກຄອງຂັ້ນແຂວງໂດຍກົງນັ້ນ ຜູ້ກ່ຽວມີສິດຍື່ນຄຳສະເໜີຕໍ່ລັດຖະບານ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ.

**ມາດຕາ 21 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງລັດຖະບານ**

ກ. ຄຳສະເໜີທີ່ລັດຖະບານ ຮັບມາຄົ້ນຄວ້າພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

1. ຄຳສະເໜີຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ພໍໃຈຕໍ່ຄຳຕົກລົງຂອງອົງການປົກຄອງຂັ້ນແຂວງ;

2. ຄຳສະເໜີຂອງ ພົນລະເມືອງ, ນິຕິບຸກ ຫຼື ການຈັດຕັ້ງຂັ້ນສູນກາງ ທີ່ຍື່ນຕໍ່ກະຊວງ, ອົງການລັດທຽບເທົ່າກະຊວງໂດຍກົງນັ້ນ ກະຊວງ, ອົງການລັດທຽບເທົ່າກະຊວງ ມອບໃຫ້ກົມກວດກາຂອງຕົນ ກວດກາ, ຄົ້ນຄວ້າ ແລ້ວສະເໜີຕໍ່ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ພິຈາລະນາແກ້ໄຂ;

3. ຄຳສະເໜີທີ່ບໍ່ພໍໃຈຕໍ່ຂໍ້ຕົກລົງຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ຄວາມຮັບຜິດຊອບ, ການກະທຳຂອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ.

ໃນກໍລະນີຜູ້ສະເໜີ ຫາກຍັງບໍ່ພໍໃຈຕໍ່ການຕົກລົງຂອງ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຜູ້ກ່ຽວມີສິດສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາແກ້ໄຂ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ.

ຂ. ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້:

1. ລັດຖະບານ ມອບໃຫ້ອົງການກວດກາລັດຖະບານ ສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ກວດກາ ຄົ້ນຄວ້າ, ຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ ລັດຖະບານ ພິຈາລະນາແກ້ໄຂ ພາຍໃນເວລາ ສີ່ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ;

2. ລັດຖະບານ ອອກຂໍ້ຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ແລ້ວແຈ້ງການຕົກລົງໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີຜູ້ສະເໜີຫາກບໍ່ພໍໃຈຕໍ່ການຕົກລົງຂອງລັດຖະບານ ຜູ້ກ່ຽວມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຫຼື ຮ້ອງຂໍຄວາມເປັນທຳຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

## ໝວດທີ 2
## ການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ

### ມາດຕາ 22 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ

ການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ ແມ່ນ ການນຳເອົາຄຳຮ້ອງຟ້ອງຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມາພິຈາລະນາຕາມກົດໝາຍ.

### ມາດຕາ 23 ອົງການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ

ອົງການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ ມີ ດັ່ງນີ້:

- ອົງການສືບສວນ-ສອບສວນ;
- ອົງການໄອຍະການປະຊາຊົນ;
- ສານປະຊາຊົນ.

### ມາດຕາ 24 (ປັບປຸງ) ວິທີການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ

ວິທີການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ

**ມາດຕາ 25 (ໃໝ່) ການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ**

ການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ແມ່ນ ການນຳເອົາຄຳຮ້ອງຂໍຄວາມເປັນທຳ ທີ່ບໍ່ພໍໃຈຕໍ່ການຕົກລົງແກ້ໄຂຄຳສະເໜີ ຂອງລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນ ຫຼື ບໍ່ພໍໃຈຕໍ່ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດໃນແຕ່ລະຂັ້ນນັ້ນ.

**ມາດຕາ 26 (ປັບປຸງ) ອົງການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ**

ອົງການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ມີ ດັ່ງນີ້:

- ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
- ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 27 (ປັບປຸງ) ກຳນົດເວລາ ໃນການຍື່ນ, ການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ**

ຄຳຮ້ອງຂໍຄວາມເປັນທຳໃຫ້ຍື່ນຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ພາຍໃນເວລາ ສາມເດືອນ ນັບແຕ່ວັນຮັບຊາບ ຜົນການແກ້ໄຂຄຳສະເໜີ ຂອງອົງການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຫຼື ຜົນການແກ້ໄຂຄຳຮ້ອງຟ້ອງຂອງ ອົງການພິຈາລະນາ ແລະ ແກ້ໄຂຄຳຮ້ອງຟ້ອງ.

ຄຳຮ້ອງຂໍຄວາມເປັນທຳ ຕ້ອງໄດ້ຮັບການ ພິຈາລະນາ ແລະ ແກ້ໄຂ ພາຍໃນເວລາ ສີ່ສິບຫ້າ ວັນນັບແຕ່ວັນໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ເປັນຕົ້ນໄປ ຍົກເວັ້ນຄຳຮ້ອງຂໍຄວາມເປັນທຳ ທີ່ມີຄວາມຫຍຸ້ງຍາກ ຊຶ່ງພົວພັນກັບຫຼາຍພາກສ່ວນ.

**ມາດຕາ 28 (ໃໝ່) ຄຳຮ້ອງຂໍຄວາມເປັນທຳທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຮັບມາພິຈາລະນາ ແລະ ແກ້ໄຂ**

ຄຳຮ້ອງຂໍຄວາມເປັນທຳທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຮັບມາພິຈາລະນາ ແລະ ແກ້ໄຂ ມີດັ່ງນີ້:

1. ຄຳຮ້ອງຂໍຄວາມເປັນທຳ ທີ່ບໍ່ພໍໃຈຕໍ່ການແກ້ໄຂຄຳສະເໜີ ຂອງອົງການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂໍ້ ຂ ວັກ 2 ແລະ ມາດຕາ 20 ຂໍ້ ຂ ວັກ 2 ຂອງກົດໝາຍສະບັບນີ້;
2. ຄຳຮ້ອງຂໍຄວາມເປັນທຳທີ່ບໍ່ພໍໃຈ ຕໍ່ຄຳຕົກລົງຂອງສານປະຊາຊົນເຂດ, ສານປະຊາຊົນແຂວງ, ນະຄອນຫຼວງ.

ສຳລັບຄຳຮ້ອງຂໍຄວາມເປັນທຳ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ຂອງມາດຕານີ້ ໃຫ້ຮັບ ແລະ ພິຈາລະນາແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສົ່ງໃຫ້ອົງການທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາແກ້ໄຂ ແລະ ແຈ້ງໃຫ້ຜູ້ກ່ຽວຊາບເພື່ອສືບຕໍ່ຕິດຕາມການແກ້ໄຂ.

ມາດຕາ 29 (ປັບປຸງ) ຂັ້ນຕອນການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄໍາສະເໜີ ຫຼື ຄໍາຮ້ອງຂໍຄວາມເປັນທໍາ ຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ

ການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄໍາຮ້ອງຂໍຄວາມເປັນທໍາ ຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຮັບຄໍາຮ້ອງຂໍຄວາມເປັນທໍາ ແລ້ວມອບໃຫ້ຄະນະກໍາມະການຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫຼື ຄະນະກໍາມະການອື່ນທີ່ກ່ຽວຂ້ອງ ກວດກາ, ຄົ້ນຄວ້າ ຂໍ້ມູນ, ຫຼັກຖານຕົວຈິງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງພາວະວິໄສ ພາຍໃນເວລາ ສາມສິບວັນ ແລ້ວສະເໜີ ຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາຕົກລົງ;

2. ຄະນະກໍາມະການຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫຼື ຄະນະກໍາມະການອື່ນທີ່ກ່ຽວຂ້ອງແຈ້ງການຕົກລົງ ເປັນລາຍລັກອັກສອນ ໂດຍບົ່ງບອກແຈ້ງຄວາມຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ເຫດຜົນຂອງແຕ່ລະບັນຫາໃຫ້ຊັດເຈນ ແລະ ຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການ ໃຫ້ຜູ້ສະເໜີ ຫຼື ຜູ້ຮ້ອງຂໍຄວາມເປັນທໍາ, ຜູ້ຖືກສະເໜີ ຫຼື ຜູ້ຖືກຮ້ອງຂໍຄວາມເປັນທໍາ, ການຈັດຕັ້ງຂອງລັດ ແລະ ພາກສ່ວນກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ ພາຍໃນເວລາ ສາມສິບວັນ;

3. ຄະນະກໍາມະການຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫຼື ຄະນະກໍາມະການອື່ນທີ່ກ່ຽວຂ້ອງ ຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຕາມການຕົກລົງຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

4. ໃນກໍລະນີ ຜູ້ສະເໜີ ຫຼື ຜູ້ຮ້ອງຂໍຄວາມເປັນທໍາ ຫາກຍັງບໍ່ພໍໃຈຕໍ່ການຕົກລົງຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ກໍມີສິດສະເໜີ ຫຼື ຮ້ອງຂໍຄວາມເປັນທໍາ ຕໍ່ຄະນະປະຈໍາສະພາແຫ່ງຊາດ ເພື່ອກວດກາ.

ມາດຕາ 30 (ປັບປຸງ) ຄໍາຮ້ອງຂໍຄວາມເປັນທໍາທີ່ຄະນະປະຈໍາສະພາແຫ່ງຊາດ ຮັບມາກວດກາ, ຄົ້ນຄວ້າ ແລະ ພິຈາລະນາ

ຄໍາຮ້ອງຂໍຄວາມເປັນທໍາທີ່ຄະນະປະຈໍາສະພາແຫ່ງຊາດ ຮັບມາກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ມີ ດັ່ງນີ້:

1. ຄໍາຮ້ອງຂໍຄວາມເປັນທໍາ ທີ່ບໍ່ພໍໃຈຕໍ່ການແກ້ໄຂຄໍາສະເໜີ ຂອງລັດຖະບານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 21 ຂອງກົດໝາຍສະບັບນີ້;

2. ຄໍາຮ້ອງຂໍຄວາມເປັນທໍາ ທີ່ບໍ່ພໍໃຈຕໍ່ການຕົກລົງ ຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້;

3. ຄໍາຮ້ອງຂໍຄວາມເປັນທໍາທີ່ບໍ່ພໍໃຈຕໍ່ຄໍາພິພາກສາຂອງ ສານປະຊາຊົນພາກ, ສານປະຊາຊົນສູງສຸດ.

ສໍາລັບຄໍາຮ້ອງຂໍຄວາມເປັນທໍາ ທີ່ບໍ່ໄດ້ກໍານົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ ໃຫ້ຮັບ ແລະ ພິຈາລະນາແກ້ໄຂ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສົ່ງໃຫ້ອົງການທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາແກ້ໄຂ ແລະ ແຈ້ງໃຫ້ຜູ້ກ່ຽວຊາບເພື່ອສືບຕໍ່ຕິດຕາມການແກ້ໄຂ.

**ມາດຕາ 31 (ປັບປຸງ) ຂັ້ນຕອນການ ກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ**

ການກວດກາ, ຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ຮັບຄຳຮ້ອງຂໍຄວາມເປັນທຳ ແລ້ວມອບໃຫ້ກຳມາທິການຍຸຕິທຳ ຫຼື ກຳມາທິການອື່ນທີ່ກ່ຽວຂ້ອງ ກວດກາ, ຄົ້ນຄວ້າ, ຂໍ້ມູນ, ຫຼັກຖານຕົວຈິງ ຕາມກົດໝາຍທີ່ກ່ຽວຂ້ອງຢ່າງພາວະວິໄສ ພາຍໃນເວລາ ສາມສິບວັນ ແລ້ວສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ;

2. ກຳມາທິການຍຸຕິທຳ ຫຼື ກຳມາທິການອື່ນທີ່ກ່ຽວຂ້ອງ ແຈ້ງຜົນຂອງການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ເປັນລາຍລັກອັກສອນ ໂດຍບົ່ງບອກແຈ້ງຄວາມຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ເຫດຜົນຂອງແຕ່ລະບັນຫາໃຫ້ຊັດເຈນ ແລະ ຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການ ໃຫ້ຜູ້ສະເໜີ ຫຼື ຜູ້ຮ້ອງຂໍຄວາມເປັນທຳ, ຜູ້ຖືກສະເໜີ ຫຼື ຜູ້ຖືກຮ້ອງຂໍຄວາມເປັນທຳ, ການຈັດຕັ້ງຂອງລັດ ແລະ ພາກສ່ວນກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ ພາຍໃນເວລາ ສາມສິບວັນ;

3. ກຳມາທິການຍຸຕິທຳ ຫຼື ກຳມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຜົນການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 32 (ໃໝ່) ການຕິດຕາມກວດກາຜົນຂອງການຈັດຕັ້ງປະຕິບັດ ການຕົກລົງຂອງຄະນະປະຈຳ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມອບໃຫ້ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫຼື ຄະນະກຳມະການອື່ນທີ່ກ່ຽວຂ້ອງ ຕິດຕາມ ກວດກາ ແລະ ຊຸກຍູ້ ອົງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ຄະນະປະຈຳສະພາແຫ່ງຊາດ ມອບໃຫ້ກຳມາທິການຍຸຕິທຳ ຫຼື ກຳມາທິການອື່ນທີ່ກ່ຽວຂ້ອງ ຕິດຕາມ ກວດກາ ແລະ ຊຸກຍູ້ ອົງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຕາມຜົນການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

ອົງການທີ່ກ່ຽວຂ້ອງ ຕ້ອງລາຍງານການຈັດຕັ້ງປະຕິບັດຜົນການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມກຳນົດເວລາດັ່ງກ່າວ ຍ້ອນມີຄວາມຫຍຸ້ງຍາກສັບສົນ, ກ່ຽວພັນເຖິງຫຼາຍພາກສ່ວນ ໃຫ້ພາກສ່ວນກ່ຽວຂ້ອງມາຊີ້ແຈງເຫດຜົນຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 4
## ການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຂອງອົງການຈັດຕັ້ງອື່ນ

**ມາດຕາ 33 (ໃໝ່) ການຍື່ນຄຳຮ້ອງທຸກ ຕໍ່ອົງການຈັດຕັ້ງອື່ນ**

ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດ ຍື່ນຄຳຮ້ອງທຸກ ຕໍ່ອົງການຈັດຕັ້ງພັກ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ພິຈາລະນາ ເມື່ອມີບຸກຄົນ ຫຼື ການຈັດຕັ້ງລະເມີດກົດໝາຍ ພາໃຫ້ເກີດຄວາມເສຍຫາຍຕໍ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ຜົນປະໂຫຍດອັນຊອບທຳຂອງຕົນ.

**ມາດຕາ 34 (ໃໝ່) ການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຂອງອົງການຈັດຕັ້ງອື່ນ**

ອົງການຈັດຕັ້ງຂອງ ພັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ທີ່ໄດ້ຮັບຄຳຮ້ອງທຸກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດ ແລະ ໜ້າທີ່ ພິຈາລະນາ ແລະ ແກ້ໄຂຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ; ຖ້າຄຳຮ້ອງທຸກດັ່ງກ່າວ ຫາກບໍ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ກໍຕ້ອງສົ່ງໄປຍັງອົງການອື່ນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ພ້ອມທັງແຈ້ງໃຫ້ຜູ້ຍື່ນຄຳຮ້ອງທຸກຮັບຊາບ ແລະ ສືບຕໍ່ຕິດຕາມການແກ້ໄຂ ຫຼື ແນະນຳໃຫ້ຜູ້ຮ້ອງທຸກໄປຍື່ນໂດຍກົງຕໍ່ອົງການທີ່ກ່ຽວຂ້ອງ.

## ພາກທີ IV
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 35 ຫຼັກການເຮັດວຽກ**

ການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ມີການແບ່ງງານໃຫ້ບຸກຄົນຮັບຜິດຊອບ, ມີການປະຊຸມປຶກສາຫາລື, ມີການກວດກາ.

ການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຕ້ອງດຳເນີນຕາມແຜນການ, ມີຂໍ້ມູນຫຼັກຖານ, ລົງຕົວຈິງ, ມີການສະຫຼຸບ ແລະ ຖອດຖອນບົດຮຽນ, ມີການປະສານສົມທົບກັບບັນດາອົງການ ແລະ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 36 (ປັບປຸງ) ແບບແຜນວິທີເຮັດວຽກ**

ການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຂອງອົງການແກ້ໄຂຄຳຮ້ອງທຸກ ໃຫ້ປະສານສົມທົບ, ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ.

ການຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກຢູ່ຂັ້ນທ້ອງຖິ່ນ ຫາກມີຄວາມຈຳເປັນ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ອາດເຊີນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນ ມາປຶກສາຫາລືແກ້ໄຂຄຳຮ້ອງຂໍຄວາມເປັນທຳ; ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອາດເຊີນປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງມາປຶກສາຫາລືແກ້ໄຂຄຳສະເໜີ.

ການຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄໍາຮ້ອງທຸກຢູ່ຂັ້ນສູນກາງ ຫາກມີຄວາມຈໍາເປັນ ປະທານຄະນະປະຈໍາສະພາແຫ່ງຊາດ ອາດເຊີນນາຍົກລັດຖະມົນຕີ ຫຼື ຜູ້ຕາງໜ້າລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມາປຶກສາຫາລືແກ້ໄຂຄໍາຮ້ອງຂໍຄວາມເປັນທໍາ; ນາຍົກລັດຖະມົນຕີ ອາດສະເໜີໃຫ້ ປະທານອົງການກວດກາລັດຖະບານ, ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງອື່ນທີ່ກ່ຽວຂ້ອງ ມາຊີ້ແຈງ, ອະທິບາຍ ແລະ ປຶກສາຫາລືກ່ຽວກັບຄໍາສະເໜີ.

## ພາກທີ V
## ຄວາມຮັບຜິດຊອບຕໍ່ຜົນການຕົກລົງແກ້ໄຂຄໍາຮ້ອງທຸກ

### ມາດຕາ 37 (ໃໝ່) ຄວາມຮັບຜິດຊອບຕໍ່ຜົນການຕົກລົງແກ້ໄຂຄໍາສະເໜີ

ອົງການພິຈາລະນາ ແລະ ແກ້ໄຂຄໍາສະເໜີ ແຕ່ລະຂັ້ນມີຄວາມຮັບຜິດຊອບຕໍ່ຜົນການຕົກລົງແກ້ໄຂຄໍາສະເໜີຂອງຕົນ ດັ່ງນີ້:

1. ອໍານວຍຄວາມສະດວກ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຜົນການຕົກລົງແກ້ໄຂຄໍາສະເໜີ;
2. ຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບຜົນການຕົກລົງຂອງຕົນ;
3. ໂຈະ ຫຼື ຍົກເລີກການຕົກລົງຂອງຕົນທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;
4. ພິຈາລະນາຄົ້ນຄວ້າຂໍ້ມູນ, ຫຼັກຖານຄືນໃໝ່ ເມື່ອເຫັນວ່າຜົນການແກ້ໄຂບໍ່ຖືກຕ້ອງ;
5. ປະຕິບັດຕາມການຕົກລົງຮ່ວມລະຫວ່າງພາກສ່ວນ ແລະ ອົງການທີ່ກ່ຽວຂ້ອງ ກ່ຽວກັບວິທີການແກ້ໄຂຜົນການຕົກລົງໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ;
6. ອະທິບາຍ, ຊີ້ແຈງ ເຫດຜົນຂອງການແກ້ໄຂຄໍາສະເໜີ ໃຫ້ຜູ້ສະເໜີຮັບຮູ້ ແລະ ຈັດຕັ້ງປະຕິບັດ;
7. ລາຍງານການແກ້ໄຂຜົນການຕົກລົງຂອງຕົນຕໍ່ຂັ້ນເທິງ.

### ມາດຕາ 38 (ໃໝ່) ຄວາມຮັບຜິດຊອບຕໍ່ຜົນການຕົກລົງແກ້ໄຂຄໍາຮ້ອງຟ້ອງ

ອົງການພິຈາລະນາ ແລະ ແກ້ໄຂຄໍາຮ້ອງຟ້ອງ ແຕ່ລະຂັ້ນມີຄວາມຮັບຜິດຊອບຕໍ່ຜົນການຕົກລົງແກ້ໄຂຄໍາຮ້ອງຟ້ອງຂອງຕົນ ດັ່ງນີ້:

1. ຮັບຜິດຊອບຕໍ່ຄວາມເສຍຫາຍຂອງຂໍ້ມູນຫຼັກຖານໃນສໍານວນຄະດີຕ່າງໆທີ່ຕົນໄດ້ຮັບ;
2. ອໍານວຍຄວາມສະດວກ ແລະ ແນະນໍາຄູ່ຄວາມໃນການດໍາເນີນຕາມຂັ້ນຕອນຂອງກົດໝາຍ;
3. ຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບການຕົກລົງຂອງຕົນ;
4. ໂຈະ ຫຼື ຍົກເລີກການຕົກລົງຂອງຕົນທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;
5. ພິຈາລະນາຄົ້ນຄວ້າຂໍ້ມູນ, ຫຼັກຖານຄືນໃໝ່ ເມື່ອເຫັນວ່າຜົນການແກ້ໄຂບໍ່ຖືກຕ້ອງ;
6. ອະທິບາຍ, ຊີ້ແຈງ ເຫດຜົນຂອງການແກ້ໄຂຄໍາສະເໜີ ຫຼື ຄໍາຮ້ອງຟ້ອງ ໃຫ້ຜູ້ສະເໜີ ຫຼື ຜູ້ຮ້ອງຟ້ອງຮັບຮູ້ ແລະ ຈັດຕັ້ງປະຕິບັດ;
7. ລາຍງານການແກ້ໄຂຜົນການຕົກລົງຂອງຕົນຕໍ່ຂັ້ນເທິງ.

ມາດຕາ 39 (ໃໝ່) ຄວາມຮັບຜິດຊອບຕໍ່ຜົນການພິຈາລະຕົກລົງຄໍາຮ້ອງຂໍຄວາມເປັນທໍາ

ອົງການກວດກາ, ຄົ້ນຄວ້າ, ພິຈາລະນາ ຄໍາຮ້ອງຂໍຄວາມເປັນທໍາ ແຕ່ລະຂັ້ນມີຄວາມຮັບຜິດຊອບຕໍ່ຜົນການພິຈາລະນາຕົກລົງຄໍາຮ້ອງຂໍຄວາມເປັນທໍາຂອງຕົນ ດັ່ງນີ້:

1. ເກັບສໍາເນົາຮັກສາຂໍ້ມູນ, ຫຼັກຖານ ແລະ ເອກະສານກ່ຽວກັບຜົນການຕົກລົງຂອງຕົນຢ່າງເປັນລະບົບ;

2. ຕິດຕາມຊຸກຍູ້ພາກສ່ວນທີ່ກ່ຽວຈັດຕັ້ງປະຕິບັດຕາມການຕົກລົງຂອງຕົນໃຫ້ສໍາເລັດ;

3. ຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບຜົນການຕົກລົງຂອງຕົນ;

4. ພິຈາລະນາຄົ້ນຄວ້າຂໍ້ມູນ, ຫຼັກຖານຄືນໃໝ່ ເມື່ອເຫັນວ່າຜົນການແກ້ໄຂບໍ່ຖືກຕ້ອງ;

5. ໂຈະ ຫຼື ຍົກເລີກການຕົກລົງຂອງຕົນທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;

6. ປະຕິບັດຕາມການຕົກລົງຮ່ວມລະຫວ່າງພາກສ່ວນ ແລະ ອົງການທີ່ກ່ຽວຂ້ອງ ກ່ຽວກັບວິທີການແກ້ຜົນການຕົກລົງໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ;

7. ອະທິບາຍ, ຊີ້ແຈງ ເຫດຜົນຂອງການແກ້ໄຂຄໍາຮ້ອງຂໍຄວາມເປັນທໍາ ໃຫ້ຜູ້ຮ້ອງຂໍຄວາມເປັນທໍາຮັບຮູ້ ແລະ ຈັດຕັ້ງປະຕິບັດ;

8. ລາຍງານການແກ້ໄຂຜົນການຕົກລົງຂອງຕົນຕໍ່ຂັ້ນເທິງ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 40 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ຮ້ອງທຸກ**

ຫ້າມຜູ້ຮ້ອງທຸກ ມີ ພຶດຕິກໍາ ດັ່ງນີ້:

1. ຮ້ອງທຸກ, ໃຫ້ການ ຫຼື ລາຍງານ ບໍ່ມີມູນຄວາມຈິງ;

2. ສວຍໃຊ້ການຮ້ອງທຸກ ເພື່ອແກ່ຍາວເວລາ, ໃສ່ຮ້າຍປ້າຍສີຜູ້ອື່ນ, ກໍ່ຄວາມບໍ່ສະຫງົບໃນສັງຄົມ;

3. ຊື້ຈ້າງຈອບອອຍ, ໃຫ້ສິນບົນ, ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ຜູ້ມີສິດ ແລະ ໜ້າທີ່ແກ້ໄຂຄໍາຮ້ອງທຸກ;

4. ອ້າງອີງຊື່ຂອງຜູ້ມີອໍານາດ ແລະ ມີອິດທິພົນ.

**ມາດຕາ 41 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ຖືກຮ້ອງທຸກ**

ຫ້າມຜູ້ຖືກຮ້ອງທຸກ ມີ ພຶດຕິກໍາ ດັ່ງນີ້:

1. ຊື້ຈ້າງຈອບອອຍ, ໃຫ້ສິນບົນ, ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ຜູ້ຮ້ອງທຸກ, ຕໍ່ຜູ້ມີສິດ ແລະ ໜ້າທີ່ແກ້ໄຂຄໍາຮ້ອງທຸກ;

2. ປົກປິດ, ເຊື່ອງອໍາ, ທໍາລາຍຂໍ້ມູນ, ຫຼັກຖານຕ່າງໆ ທີ່ກ່ຽວຂ້ອງກັບຄໍາຮ້ອງທຸກ;

3. ໃຫ້ການ ຫຼື ລາຍງານບໍ່ມີມູນຄວາມຈິງ ຕໍ່ຜູ້ມີສິດ ແລະ ໜ້າທີ່ແກ້ໄຂຄໍາຮ້ອງທຸກ;

4. ອ້າງອີງຊື່ຂອງຜູ້ມີອໍານາດ ແລະ ມີອິດທິພົນ.

ມາດຕາ 42 (ປັບປຸງ) ຂໍ້ຫ້າມສໍາລັບພະນັກງານ ຫຼື ເຈົ້າໜ້າທີ່ຂອງອົງການແກ້ໄຂຄໍາຮ້ອງທຸກ

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ຂອງອົງການແກ້ໄຂຄໍາຮ້ອງທຸກ ມີ ພຶດຕິກໍາ ດັ່ງນີ້:

1. ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບ, ກົດໜ່ວງຖ່ວງດຶງ, ແກ່ຍາວເວລາໃນການຄົ້ນຄວ້າແກ້ໄຂຄໍາຮ້ອງທຸກ;

2. ສວຍໃຊ້ໜ້າທີ່, ຕໍາແໜ່ງ, ຂໍເອົາ, ທວງເອົາ ແລະ ຮັບສິນບົນ;

3. ປົກປິດ, ເຊື່ອງອໍາ, ທໍາລາຍຂໍ້ມູນ, ຫຼັກຖານຕ່າງໆ ທີ່ກ່ຽວຂ້ອງກັບຄໍາຮ້ອງທຸກ;

4. ບັງຄັບ, ນາບຂູ່ ຜູ້ຮ້ອງທຸກ ແລະ ຜູ້ຖືກຮ້ອງທຸກ;

5. ເປີດເຜີຍຂໍ້ມູນ, ຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຜູ້ຮ້ອງທຸກ ໃນກໍລະນີ ທີ່ເຫັນວ່າຈະເປັນອັນຕະລາຍຕໍ່ຜູ້ຮ້ອງທຸກ.

ມາດຕາ 43 ຂໍ້ຫ້າມສໍາລັບບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກໍາ ດັ່ງນີ້:

1. ຍຸແຍ່, ຊວນເຊື່ອ ຫຼື ຊື້ຈ້າງຈອບອອຍ ໃຫ້ຜູ້ອື່ນທໍາການຮ້ອງທຸກທີ່ບໍ່ມີມູນຄວາມຈິງ;

2. ແຊກແຊງ, ບັງຄັບ, ນາບຂູ່ ພະນັກງານຂອງອົງການແກ້ໄຂຄໍາຮ້ອງທຸກ, ຜູ້ຮ້ອງທຸກ ຫຼື ຜູ້ຖືກຮ້ອງທຸກ;

3. ປົກປິດ, ເຊື່ອງອໍາ ຜູ້ຖືກຮ້ອງທຸກ ຫຼື ປິດບັງ, ທໍາລາຍ ຂໍ້ມູນ, ຫຼັກຖານກ່ຽວກັບຄໍາຮ້ອງທຸກ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 44 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 45 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດ ຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

ມາດຕາ 46 (ໃໝ່) ມາດຕະການສຶກສາອົບຮົມ

ບຸກຄົນໃດ ທີ່ກໍ່ຄວາມເສຍຫາຍໜ້ອຍ, ມີຄວາມຈິງໃຈລາຍງານ, ຮັບສາລະພາບ ຕໍ່ຄວາມຜິດຂອງຕົນຕໍ່ການຈັດຕັ້ງ ແລະ ສິ່ງຊັບທີ່ໄດ້ເອົາໄປໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ແກ່ການຈັດຕັ້ງ ແລະ ບຸກຄົນອື່ນຢ່າງຄົບຖ້ວນແລ້ວ ກໍຈະໄດ້ຮັບການສຶກສາອົບຮົມ ແລະ ກ່າວເຕືອນ.

ມາດຕາ 47 (ໃໝ່) ມາດຕະການທາງວິໄນ

ບຸກຄົນໃດ ທີ່ໄດ້ກະທຳຜິດໃນສະຖານເບົາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງບຸກຄົນນັ້ນ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ມາດຕາ 48 (ໃໝ່) ມາດຕະການທາງແພ່ງ

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍ ຊຶ່ງກໍ່ຄວາມເສຍຫາຍ ຕໍ່ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກໍຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນນັ້ນຢ່າງຄົບຖ້ວນ.

ມາດຕາ 49 (ໃໝ່) ມາດຕະການທາງອາຍາ

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນ ການໃຫ້ ແລະ ຮັບສິນບົນ, ການສວຍໃຊ້ສິດອຳນາດໜ້າທີ່ເກີນຂອບເຂດ, ການປອມແປງເອກະສານ, ຍັກຍອກ, ສໍ້ໂກງຊັບ ແລະ ສໍ້ລາດບັງຫຼວງ ກໍຈະຖືກລົງໂທດທາງອາຍາຕາມກົດໝາຍ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

ມາດຕາ 50 (ປັບປຸງ) ການຈັດຕັ້ງປະຕິບັດ

ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 51 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 53/ສພຊ, ລົງວັນທີ 15 ທັນວາ 2014.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້